ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 224 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 25 ພະຈິກ 2020

# ລັດຖະດຳລັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ວ່າດ້ວຍການໃຫ້ອະໄພຍະໂທດແກ່ນັກໂທດທີ່ມີຄວາມກ້າວໜ້າ**
**ໃນຂອບເຂດທົ່ວປະເທດ ເນື່ອງໃນໂອກາດວັນຊາດທີ 2 ທັນວາ 2020 ຄົບຮອບ 45 ປີ**

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດ VI ມາດຕາ 67, ຂໍ້ 12 ກ່ຽວກັບການຕົກລົງໃຫ້ອະໄພຍະໂທດ;
- ອີງຕາມ ໜັງສືສະເໜີຂອງນາຍົກລັດຖະມົນຕີ ສະບັບເລກທີ 118/ນຍ, ລົງວັນທີ 19 ຕຸລາ 2020.

**ປະທານປະເທດ**
**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

**ມາດຕາ 1** ຕົກລົງອະໄພຍະໂທດ ໃຫ້ແກ່ນັກໂທດຈຳນວນ 1.791 ຄົນ, ຍິງ 280 ຄົນ; ຕ່າງປະເທດ 34 ຄົນ, ຍິງ 08 ຄົນ. ຊຶ່ງລາຍລະອຽດ ແມ່ນໄດ້ກຳນົດໄວ້ໃນບັນຊີ ລຸ່ມນີ້:

1. ບັນຊີເລກທີ 55, 56, 58, 59, 60, 61, 62, 63, 64, 65, 67, 68, 70, 71, 73, 75, 77, 78, 80, 82, ລົງວັນທີ 01 ຕຸລາ 2020; ຊຶ່ງມີນັກໂທດໄດ້ຮັບອະໄພຍະໂທດຫຼຸດຜ່ອນໂທດ ທັງໝົດ ຈຳນວນ 1.761 ຄົນ, ຍິງ 277 ຄົນ; ຄົນຕ່າງປະເທດ 34 ຄົນ, ຍິງ 08 ຄົນ.
2. ບັນຊີ ເລກທີ 57, 66, 69, 72, 74, 76, 79, 81, ລົງວັນທີ 01 ຕຸລາ 2020; ຊຶ່ງມີນັກໂທດໄດ້ຮັບອະໄພຍະໂທດປ່ອຍຕົວ ທັງໝົດ ຈຳນວນ 30 ຄົນ, ຍິງ 03 ຄົນ.

**ມາດຕາ 2** ມອບໃຫ້ພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດລັດຖະດຳລັດ ສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 3** ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ.

ບຸນຍັງ ວໍລະຈິດ